**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----=====00000=====----

ທະນາຄານແຫ່ງ ສປປ ລາວ

ເລກທີ:..551......./ທຫລ
ນະຄອນຫຼວງວຽງຈັນ, ວັນທີ:....11 JUL 2016

# ຂໍ້ຕົກລົງ
# ວ່າດ້ວຍລະບົບຊໍາລະ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທຸລະກໍາທາງດ້ານເອເລັກໂຕຣນິກ ສະບັບເລກທີ 20/ສພຊ ລົງວັນທີ 7 ທັນວາ 2012.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງການເຄື່ອນໄຫວວຽກງານການຊໍາລະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າຮ່ວມໃນລະບົບຊໍາລະ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວມີຄວາມທັນສະໄໝ, ປອດໄພ ແລະ ມີປະສິດທິພາບ, ແນໃສ່ອໍານວຍຄວາມສະດວກ ແລະ ຕອບສະໜອງຄວາມຕ້ອງການ ໃຫ້ແກ່ການຊໍາລະຄ່າສິນຄ້າ, ການບໍລິການ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ສາມາດເຊື່ອມໂຍງພາກພື້ນ ແລະ ສາກົນ.

**ມາດຕາ 2 ລະບົບຊໍາລະ**

ລະບົບຊໍາລະ ແມ່ນສູນກາງການບໍລິຫານຄຸ້ມຄອງ ແລະ ບໍລິການກ່ຽວກັບການໂອນເງິນ, ການສັ່ງຈ່າຍ, ການອອກ ແລະ ການຄຸ້ມຄອງເຄື່ອງມືຊໍາລະ, ການຄຸ້ມຄອງລະບົບການຊໍາລະ, ລະບົບໄລ່ລຽງ ແລະ ລະບົບຫັກບັນຊີ ລວມທັງຂະບວນການຕ່າງໆ ທີ່ຕິດພັນກັບການຊໍາລະຫຼັກຊັບ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຊຳລະ** ໝາຍເຖິງ ການສັ່ງຈ່າຍ ຫຼື ໂອນ, ການໄລ່ລຽງ ແລະ ການຫັກບັນຊີ ໂດຍມີຜູ້ເຂົ້າຮ່ວມແຕ່ສາມຝ່າຍຂຶ້ນໄປ ຊຶ່ງປະກອບດ້ວຍ ຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊຳລະ ແລະ ລູກຄ້າ;
2. **ຜູ້ໃຫ້ບໍລິການຊຳລະ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນການສະໜອງການບໍລິການຊຳລະ;
3. **ການບໍລິການຊຳລະ** ໝາຍເຖິງ ການໃຫ້ບໍລິການຮັບຝາກເງິນ, ໂອນເງິນ, ຖອນເງິນ, ການອອກ, ການຮັບເຄື່ອງມືຊຳລະ ແລະ ການບໍລິການອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;
4. **ເຄື່ອງມືຊຳລະ** ໝາຍເຖິງ ເຄື່ອງມືທີ່ສາມາດສຳພັດ ຫຼື ບໍ່ສາມາດສຳພັດໄດ້ ທີ່ໃຊ້ໃນການຊຳລະ ຫຼື ໂອນ ເພື່ອໃຫ້ໄດ້ຮັບເງິນ, ສິນຄ້າ ຫຼື ການບໍລິການ ເຊັ່ນ: ເຄື່ອງຮູດບັດ (EDC=Electronic Data Capture), ເຄື່ອງຝາກ-ຖອນເງິນ (ATM= Automated Teller Machine), ອິນເຕີເນັດ, ໂທລະສັບ ແລະ ເຄື່ອງມືອື່ນໆ;
5. **ສູນໄລ່ລຽງ** ໝາຍເຖິງ ໜ່ວຍງານໜຶ່ງຂອງທະນາຄານແຫ່ງ ສປປ ລາວ ຫຼື ນິຕິບຸກຄົນໃດໜຶ່ງ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນການໃຫ້ບໍລິການໄລ່ລຽງ;
6. **ຜູ້ເຂົ້າຮ່ວມ** ໝາຍເຖິງ ຜູ້ທີ່ຖືກຮັບຮູ້ໃນຫຼັກການຂອງລະບົບຊຳລະ ຊຶ່ງມີສິດໃນການໄລ່ລຽງ ແລະ ຫັກບັນຊີ ຜ່ານລະບົບຊຳລະກັບຜູ້ເຂົ້າຮ່ວມຄົນອື່ນໆ ໂດຍທາງກົງ ຫຼື ທາງອ້ອມ. ຜູ້ເຂົ້າຮ່ວມໂດຍທາງກົງ ແມ່ນຜູ້ເຂົ້າຮ່ວມໃນລະບົບ ທີ່ເປັນຜູ້ຮັບຜິດຊອບໃນການຫັກບັນຊີດ້ວຍຕົນເອງ ແລະ ຜູ້ເຂົ້າຮ່ວມໂດຍທາງອ້ອມ ແມ່ນຜູ້ທີ່ເຂົ້າຮ່ວມໃນລະບົບ ຊຶ່ງບໍ່ມີບັນຊີທີ່ເປີດໄວ້ໃນລະບົບການຊຳລະໃດໜຶ່ງ;
7. **ຫຼັກຊັບ** ໝາຍເຖິງ ພັນທະບັດ, ຮຸ້ນກູ້ ແລະ ຫຼັກຊັບປະເພດໜີ້ອື່ນໆ ທີ່ນຳມາຊື້-ຂາຍໃນຕະຫຼາດລະຫວ່າງທະນາຄານ;
8. **ຜູ້ຄວບຄຸມລະບົບ** ໝາຍເຖິງ ທະນາຄານແຫ່ງ ສປປ ລາວ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ດຳເນີນການຄວບຄຸມລະບົບຊຳລະ;
9. **ສູນຮັບຝາກຫຼັກຊັບ** ໝາຍເຖິງ ທະນາຄານແຫ່ງ ສປປ ລາວ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ ໃນການໃຫ້ບໍລິການຂຶ້ນທະບຽນ, ຮັບຝາກ ແລະ ໂອນຫຼັກຊັບ ທີ່ນຳມາຊື້-ຂາຍໃນຕະຫຼາດລະຫວ່າງທະນາຄານ;
10. **ຫຼັກຊັບຄ້ຳປະກັນ** ໝາຍເຖິງ ພັນທະບັດ, ຮຸ້ນກູ້, ໜັງສືຄ້ຳປະກັນຂອງທະນາຄານທຸລະກິດ ແລະ ຫຼັກຊັບປະເພດອື່ນໆ ທີ່ເປັນຂອງລູກໜີ້ ຫຼື ບຸກຄົນທີສາມ ທີ່ເຈົ້າໜີ້ຍອມຮັບເປັນຫຼັກຊັບຄ້ຳປະກັນການຊຳລະ;
11. **ບັດສິນເຊື່ອ** ໝາຍເຖິງ ບັດເອເລັກໂຕຣນິກ ທີ່ກຳນົດວົງເງິນສິນເຊື່ອ ທີ່ອອກໂດຍທະນາຄານທຸລະກິດ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ເພື່ອນຳໃຊ້ໃນການຊຳລະຄ່າສິນຄ້າ, ການບໍລິການ ແລະ ທຸລະກຳທາງການເງິນອື່ນ ໂດຍມີການຮຽກເກັບເງິນຄືນ ຕາມລະບຽບການຂອງຜູ້ອອກບັດ;
12. **ບັດເງິນຝາກ** ໝາຍເຖິງ ບັດເອເລັກໂຕຣນິກ ທີ່ອອກໂດຍທະນາຄານທຸລະກິດ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍມີການຫັກເງິນທັນທີໃນບັນຊີເງິນຝາກ ຂອງຜູ້ເປັນເຈົ້າຂອງບັດ ເມື່ອນຳໃຊ້ຊຳລະຄ່າສິນຄ້າ, ການບໍລິການ ແລະ ທຸລະກຳທາງການເງິນອື່ນ;

13. ເງິນເອເລັກໂຕຣນິກ ໝາຍເຖິງ ຈຳນວນເງິນທີ່ບັນຈຸຢູ່ໃນບັດພລັດສະຕິກ, ໃນລະບົບຄອມພິວເຕີ ຫຼື ເຄື່ອງມືການຊຳລະແບບເອເລັກໂຕຣນິກປະເພດອື່ນ ຊຶ່ງຜູ້ທີ່ຕ້ອງການເງິນເອເລັກໂຕຣນິກ ຕ້ອງຈ່າຍເງິນລ່ວງໜ້າໃຫ້ແກ່ຜູ້ອອກເງິນເອເລັກໂຕຣນິກ ເພື່ອແລກປ່ຽນກັບເງິນເອເລັກໂຕຣນິກ ທີ່ກຳນົດຈຳນວນເງິນໄວ້ຢ່າງແນ່ນອນ. ເງິນເອເລັກໂຕຣນິກ ສາມາດຖອນເງິນສົດ, ຊື້ສິນຄ້າ ຫຼື ການບໍລິການອື່ນ ຕາມສະຖານທີ່ ທີ່ຜູ້ອອກເງິນເອເລັກໂຕຣນິກໄດ້ກຳນົດໄວ້;
14. **ການໂອນເງິນແບບມີ** ໝາຍເຖິງ ການສັ່ງຈ່າຍຂອງຜູ້ຈ່າຍໃຫ້ແກ່ຜູ້ຮັບ ເພື່ອການຊຳລະເງິນ ຊຶ່ງທຸກໆຄຳສັ່ງຈ່າຍ ແມ່ນຜູ້ຈ່າຍເປັນຜູ້ສັ່ງໃຫ້ທະນາຄານທຸລະກິດ ຫຼື ສະຖາບັນການເງິນໂອນ ຫຼື ຫັກບັນຊີຂອງຕົນ ໃຫ້ແກ່ຜູ້ຮັບເງິນ;
15. **ການໂອນເງິນແບບໜີ້** ໝາຍເຖິງ ການສັ່ງຈ່າຍຂອງຜູ້ຮັບເງິນ ຕໍ່ທະນາຄານ ຫຼື ສະຖາບັນການເງິນ ເພື່ອໂອນເງິນຈາກບັນຊີຜູ້ຈ່າຍ ບົນພື້ນຖານການເຫັນດີຂອງຜູ້ຈ່າຍ ຢ່າງເປັນລາຍລັກອັກສອນ. ການໂອນເງິນດັ່ງກ່າວກວມເອົາຄຳສັ່ງຈ່າຍໃດໜຶ່ງ ທີ່ອອກໂດຍທະນາຄານ ຫຼື ຜູ້ໃຫ້ບໍລິການຊຳລະເພື່ອປະຕິບັດຕາມຄຳສັ່ງຈ່າຍຂອງຜູ້ຮັບເງິນ.

**ມາດຕາ 4 ຫຼັກການເຄື່ອນໄຫວຂອງລະບົບຊຳລະ**

ການເຄື່ອນໄຫວຂອງລະບົບຊຳລະ ແມ່ນປະຕິບັດຕາມຫຼັກການ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ເຂົ້າຮ່ວມ;
2. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳຕໍ່ໜ້າກົດໝາຍ;
3. ຮັບປະກັນຄວາມປອດໄພ, ປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ລະບົບການເງິນ;
4. ເຂົ້າຮ່ວມໃນລະບົບຊຳລະດ້ວຍຄວາມສະໝັກໃຈ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າຮ່ວມໃນລະບົບຊຳລະ.

# ພາກທີ II
# ການເຄື່ອນໄຫວຂອງລະບົບຊຳລະ

## ໝວດທີ 1
## ການຂໍອະນຸຍາດດຳເນີນທຸລະກິດ ໃຫ້ບໍລິການຊຳລະ, ຄວບຄຸມລະບົບ ແລະ ຕົວແທນ

**ມາດຕາ 6 ການອອກໃບອະນຸຍາດ**

ທະນາຄານແຫ່ງ ສປປ ລາວ ມີສິດແຕ່ພຽງຜູ້ດຽວ ໃນການອອກໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການຊຳລະ ແລະ ຄວບຄຸມລະບົບ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດໃຫ້ບໍລິການຊໍາລະ ແລະ ຄວບຄຸມລະບົບ ຕ້ອງຍື່ນສໍານວນຄໍາຮ້ອງຂໍອະນຸຍາດຕໍ່ທະນາຄານແຫ່ງ ສປປ ລາວ ໂດຍຜ່ານຂະແໜງອຸດສາຫະກໍາ ແລະ ການຄ້າ.

ສໍານວນຄໍາຮ້ອງຂໍອະນຸຍາດໃຫ້ບໍລິການຊໍາລະ ແລະ ຄວບຄຸມລະບົບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 7 ເງື່ອນໄຂການຂໍດໍາເນີນທຸລະກິດໃຫ້ບໍລິການຊໍາລະ ແລະ ຄວບຄຸມລະບົບ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດໃຫ້ບໍລິການຊໍາລະ ຫຼື ຄວບຄຸມລະບົບ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີທຶນພຽງພໍໃນການດໍາເນີນທຸລະກິດ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;
2. ມີບົດວິພາກເສດຖະກິດ, ເຕັກນິກ ທີ່ສົມເຫດສົມຜົນ;
3. ມີລະບົບເຕັກນິກທີ່ທັນສະໄໝ ແລະ ປອດໄພ ສາມາດຕອບສະໜອງການບໍລິການຊໍາລະ ແລະ ສາມາດເຊື່ອມໂຍງກັບລະບົບຊໍາລະໄດ້;
4. ມີຜູ້ບໍລິຫານທີ່ມີຄຸນວຸດທິ ແລະ ປະສົບການໃນການດໍາເນີນທຸລະກິດດັ່ງກ່າວ ຢ່າງໜ້ອຍ ຫ້າປີ;
5. ມີພະນັກງານທີ່ໄດ້ມາດຕະຖານໃນການດໍາເນີນທຸລະກິດດັ່ງກ່າວ;
6. ມີລະບົບດໍາເນີນງານ, ລະບົບກວດສອບ ແລະ ຄວບຄຸມພາຍໃນຢ່າງຄົບຊຸດ;
7. ມີສະຖານທີ່ຕັ້ງ ທີ່ເໝາະສົມໃນການດໍາເນີນທຸລະກິດ;
8. ແລະ ເງື່ອນໄຂອື່ນໆ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ສາມາດໃຫ້ບໍລິການຊໍາລະໄດ້ ໂດຍບໍ່ຕ້ອງຂໍອະນຸຍາດໃນການໃຫ້ບໍລິການດັ່ງກ່າວອີກ.

### ມາດຕາ 8 ການພິຈາລະນາອອກໃບອະນຸຍາດ

ພາຍຫຼັງໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບຂໍດໍາເນີນທຸລະກິດໃຫ້ບໍລິການຊໍາລະ ຫຼື ຄວບຄຸມລະບົບ ຈາກຂະແໜງອຸດສາຫະກໍາ ແລະ ການຄ້າແລ້ວ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາ ພ້ອມທັງ ແຈ້ງຜົນເປັນລາຍລັກອັກສອນໃຫ້ແກ່ຜູ້ຮ້ອງຂໍດໍາເນີນທຸລະກິດ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ທີ່ຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

ຜູ້ຮ້ອງຂໍດໍາເນີນທຸລະກິດ ຈະໄດ້ຮັບໃບອະນຸຍາດດໍາເນີນທຸລະກິດຊົ່ວຄາວ ເມື່ອເຫັນວ່າຜູ້ຮ້ອງຂໍສາມາດຕອບສະໜອງກັບເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 7 ຂໍ້ 1, 2, 3 ແລະ 4 ຂອງຂໍ້ຕົກລົງສະບັບນີ້. ໃບອະນຸຍາດດໍາເນີນທຸລະກິດຊົ່ວຄາວ ມີອາຍຸເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ, ໃນກໍລະນີການປະຕິບັດເງື່ອນໄຂມີຄວາມຄືບໜ້າ ແຕ່ບໍ່ສາມາດປະຕິບັດສໍາເລັດພາຍໃນເວລາທີ່ກໍານົດໄວ້ ກໍສາມາດຕໍ່ອາຍຸໄດ້ບໍ່ເກີນ ເກົ້າສິບ ວັນ.

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດດໍາເນີນທຸລະກິດຖາວອນ ພາຍໃນກໍານົດເວລາສາມສິບວັນ ນັບແຕ່ວັນທີ່ຜູ້ຮ້ອງຂໍດໍາເນີນທຸລະກິດ ໄດ້ປະຕິບັດເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຢ່າງຄົບຖ້ວນເປັນຕົ້ນໄປ.

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຕ້ອງເສຍຄ່າທຳນຽມຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 9 ການນຳໃຊ້ໃບອະນຸຍາດ**

ໃບອະນຸຍາດໃຫ້ບໍລິການຊຳລະ ຫຼື ຄວບຄຸມລະບົບ ມີຜົນນຳໃຊ້ຕະຫຼອດໄລຍະການເຄື່ອນໄຫວດຳເນີນທຸລະກິດດັ່ງກ່າວ. ຜູ້ທີ່ໄດ້ຮັບໃບອະນຸຍາດ ຕ້ອງນຳໃຊ້ໃຫ້ຖືກຕ້ອງ, ບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້.

**ມາດຕາ 10 ສິດ ແລະ ໜ້າທີ່ຂອງຜູ້ຄວບຄຸມລະບົບ**

ຜູ້ຄວບຄຸມລະບົບ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ດຳເນີນການຄວບຄຸມລະບົບຊຳລະ ດ້ວຍຕົນເອງ ຫຼື ຈ້າງງານພາຍນອກ;
2. ສ້າງລະບຽບການຕ່າງໆ ກ່ຽວກັບການນຳໃຊ້ລະບົບຊຳລະ ລວມທັງກົນໄກການປ້ອງກັນຄວາມສ່ຽງຕໍ່ລະບົບຊຳລະ;
3. ຕິດຕາມກວດກາລະບົບຊຳລະ ໃຫ້ສາມາດນຳໃຊ້ຢ່າງເປັນປົກກະຕິ;
4. ເກັບຮັກສາຂໍ້ມູນ, ເປີດເຜີຍຂໍ້ມູນກ່ຽວກັບການດຳເນີນການຄວບຄຸມລະບົບ;
5. ເຂົ້າຮ່ວມໃນລະບົບຊຳລະ;
6. ລາຍງານການເຄື່ອນໄຫວວຽກງານຄວບຄຸມລະບົບ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;
7. ສິດ ແລະ ໜ້າທີ່ອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ສິດ ແລະ ໜ້າທີ່ຂອງຜູ້ໃຫ້ບໍລິການຊຳລະ**

ຜູ້ໃຫ້ບໍລິການຊຳລະ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຮັບຝາກເງິນ, ຖອນເງິນ, ໂອນເງິນ, ດຳເນີນທຸລະກຳກ່ຽວກັບການຊຳລະ;
2. ອອກ ແລະ ຮັບເຄື່ອງມືຊຳລະ;
3. ຕິດຕາມການນຳໃຊ້ເຄື່ອງມືຊຳລະ;
4. ຈ້າງງານພາຍນອກ ແລະ ນຳໃຊ້ຕົວແທນ;
5. ເຂົ້າຮ່ວມໃນລະບົບຊຳລະ;
6. ສິດ ແລະ ໜ້າທີ່ອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 12 ການຈ້າງງານພາຍນອກ**

ຜູ້ຄວບຄຸມລະບົບ ຫຼື ຜູ້ໃຫ້ບໍລິການຊຳລະ ທີ່ມີຈຸດປະສົງຈ້າງບຸກຄົນ ຫຼື ນິຕິບຸກຄົນ ຈາກພາຍນອກ ໃຫ້ປະຕິບັດໜ້າທີ່ໃນການດຳເນີນງານແທນຕົນຕ້ອງຂໍອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຊຶ່ງຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີມະຕິເຫັນດີຈາກສະພາບໍລິຫານຂອງຜູ້ຄວບຄຸມລະບົບ ຫຼື ຜູ້ໃຫ້ບໍລິການຊຳລະກ່ຽວກັບການຈ້າງບຸກຄົນ ຫຼື ນິຕິບຸກຄົນຈາກພາຍນອກ ມາປະຕິບັດໜ້າທີ່ແທນຕົນ;

2. ການຈ້າງງານພາຍນອກ ຕ້ອງບໍ່ປ່ຽນແປງສາຍພົວພັນ ແລະ ພັນທະຕ່າງໆ ຂອງຜູ້ອອກເຄື່ອງມືຊໍາລະ ຕໍ່ຜູ້ນໍາໃຊ້ເຄື່ອງມືຊໍາລະດັ່ງກ່າວ;
3. ການຈ້າງງານພາຍນອກ ຕ້ອງບໍ່ປ່ຽນແປງ ຫຼື ດັດແກ້ເງື່ອນໄຂຕ່າງໆ ໃນໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການຊໍາລະ ຫຼື ຄວບຄຸມລະບົບ;
4. ເງື່ອນໄຂອື່ນໆ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ຜູ້ຄວບຄຸມລະບົບ ຫຼື ຜູ້ໃຫ້ບໍລິການຊໍາລະ ບໍ່ສາມາດຈ້າງບຸກຄົນ ຫຼື ນິຕິບຸກຄົນ ຈາກພາຍນອກ ເພື່ອປະຕິບັດວຽກງານທີ່ສໍາຄັນໃນລະບົບການຊໍາລະ ຖ້າການຈ້າງງານດັ່ງກ່າວ ຈະສ້າງຄວາມເສຍຫາຍຢ່າງຮ້າຍແຮງ ຕໍ່ປະສິດທິພາບຂອງການຄຸ້ມຄອງພາຍໃນຂອງຜູ້ໃຫ້ບໍລິການຊໍາລະ, ຜູ້ຄວບຄຸມລະບົບ ຫຼື ເປັນອຸປະສັກໃນການຕິດຕາມກວດກາຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 13 ການນໍາໃຊ້ຕົວແທນ**

ຜູ້ໃຫ້ບໍລິການຊໍາລະ ສາມາດໃຫ້ບໍລິການຊໍາລະຜ່ານຕົວແທນຂອງຕົນ. ການເປັນຕົວແທນໃນການໃຫ້ບໍລິການຊໍາລະ ຕ້ອງປະກອບເອກະສານຂໍຂຶ້ນທະບຽນນໍາທະນາຄານແຫ່ງ ສປປ ລາວ ຊຶ່ງປະກອບດ້ວຍ:

1. ຄໍາຮ້ອງຂໍຂຶ້ນທະບຽນຕົວແທນ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ສໍາເນົາລະບຽບການຄຸ້ມຄອງບໍລິຫານພາຍໃນຂອງຕົວແທນ ລວມທັງລະບຽບການກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ຊີວະປະຫວັດຂອງຜູ້ບໍລິຫານຂອງຕົວແທນ;
4. ເອກະສານອື່ນໆ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາຂຶ້ນທະບຽນໃຫ້ຕົວແທນ ຖ້າເຫັນວ່າມີລະບຽບການຄຸ້ມຄອງບໍລິຫານພາຍໃນທີ່ເໝາະສົມ, ຜູ້ບໍລິຫານມີຄວາມຮູ້ຄວາມສາມາດ ແລະ ປະສົບການ, ມີຖັນແຖວພະນັກງານທີ່ມີຄວາມຮູ້ຄວາມສາມາດພຽງພໍ, ມີອຸປະກອນເຕັກນິກໄດ້ມາດຕະຖານ ແລະ ມີຄວາມປອດໄພ.

ຜູ້ໃຫ້ບໍລິການຊໍາລະ ຕ້ອງແຈ້ງໃຫ້ລູກຄ້າຂອງຕົນຊາບ ກ່ຽວກັບຕົວແທນທີ່ເຮັດໜ້າທີ່ແທນຕົນ ໃນການໃຫ້ບໍລິການຊໍາລະ.

**ມາດຕາ 14 ຄວາມຮັບຜິດຊອບໃນການນໍາໃຊ້ຕົວແທນ ແລະ ຈ້າງງານພາຍນອກ**

ຕົວແທນໃຫ້ບໍລິການຊໍາລະ, ຜູ້ຮັບຈ້າງງານ ມີພັນທະປະຕິບັດວຽກງານ ແລະ ເງື່ອນໄຂ ຕ່າງໆໃນນາມຜູ້ຄວບຄຸມລະບົບ ຫຼື ຜູ້ໃຫ້ບໍລິການຊໍາລະ ທີ່ຕົນເປັນຕົວແທນນັ້ນຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

ຜູ້ຄວບຄຸມລະບົບ ຫຼື ຜູ້ໃຫ້ບໍລິການຊໍາລະ ຕ້ອງມີຄວາມຮັບຜິດຊອບຢ່າງເຕັມສ່ວນ ຕໍ່ທຸກການກະທໍາຂອງພະນັກງານ, ຕົວແທນ, ສາຂາ ຫຼື ການຈັດຕັ້ງຂອງຕົນ ທີ່ສົ່ງຜົນກະທົບຕໍ່ລະບົບການຊໍາລະ.

## ໝວດທີ 2
## ການເຄື່ອນໄຫວຂອງລະບົບຊໍາລະ

**ມາດຕາ 15 ຫຼັກການດໍາເນີນງານຂອງລະບົບຊໍາລະ**

ການດໍາເນີນງານຂອງລະບົບຊໍາລະ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊໍາລະ, ຜູ້ເຂົ້າຮ່ວມທາງກົງ ຕ້ອງເປີດບັນຊີໄວ້ນໍາທະນາຄານແຫ່ງ ສປປ ລາວ ເພື່ອຊໍາລະພັນທະຕ່າງໆທີ່ກ່ຽວຂ້ອງກັບການໃຫ້ບໍລິການຊໍາລະ;
2. ການສັ່ງຈ່າຍ ຫຼື ໂອນຫຼັກຊັບຄໍ້າປະກັນ ບໍ່ສາມາດຖອນ, ໂຈະ ຫຼື ຍົກເລີກ ພາຍຫຼັງທີ່ໄດ້ປ້ອນຂໍ້ມູນເຂົ້າລະບົບ;
3. ຜູ້ຄວບຄຸມລະບົບ ຫຼື ຜູ້ເຂົ້າຮ່ວມ ທີ່ຖືກດໍາເນີນຄະດີລົ້ມລະລາຍ ຊຶ່ງບໍ່ສາມາດຟື້ນຟູໄດ້ ແມ່ນບໍ່ໃຫ້ດໍາເນີນການຄວບຄຸມລະບົບ ແລະ ເຂົ້າຮ່ວມໃນລະບົບຊໍາລະ.

**ມາດຕາ 16 ການນໍາໃຊ້ລະບົບຊໍາລະ**

ຜູ້ຄວບຄຸມລະບົບ ຕ້ອງກໍານົດລະບຽບການທີ່ເໝາະສົມ ໃນການນໍາໃຊ້ລະບົບຊໍາລະ ເພື່ອປ້ອງກັນຄວາມສ່ຽງຕ່າງໆ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກົນໄກການບໍລິຫານຈັດການພາຍໃນ, ການບໍລິຫານ, ການຄຸ້ມຄອງ ແລະ ການດໍາເນີນງານຂອງລະບົບຊໍາລະ;
2. ກໍານົດເວລາ ແລະ ຂັ້ນຕອນ ການຫັກບັນຊີຂັ້ນສຸດທ້າຍ;
3. ມາດຕະການກ່ຽວກັບການຄຸ້ມຄອງຄວາມສ່ຽງດ້ານສະພາບຄ່ອງ, ສິນເຊື່ອ ແລະ ການຫັກບັນຊີ, ວິທີການຮັບມືກັບເຫດການສຸກເສີນ ຫຼື ເຫດການທີ່ເກີດຂຶ້ນ ໂດຍບັງເອີນ.

ຜູ້ຄວບຄຸມລະບົບ ບໍ່ສາມາດປ່ຽນແປງເນື້ອໃນລະບຽບການຂອງຕົນເອງ ທີ່ອາດສົ່ງຜົນກະທົບຕໍ່ໂຄງສ້າງ, ການດໍາເນີນງານ ຫຼື ການບໍລິຫານຂອງລະບົບຊໍາລະ ຍົກເວັ້ນກໍລະນີທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຊຶ່ງຕ້ອງແຈ້ງໃຫ້ຜູ້ເຂົ້າຮ່ວມ ຊາບຢ່າງເປັນລາຍລັກອັກສອນຢ່າງໜ້ອຍ ສາມສິບວັນ ກ່ອນການປ່ຽນ ແປງດັ່ງກ່າວຈະຖືກຈັດຕັ້ງປະຕິບັດ.

**ມາດຕາ 17 ລະບົບໄລ່ລຽງ**

ລະບົບໄລ່ລຽງ ແມ່ນຂະບວນການທີ່ມີການສົ່ງ, ສົມທຽບ ແລະ ຢັ້ງຢືນຂໍ້ມູນໃນການສັ່ງຈ່າຍ ຫຼື ໂອນຫຼັກຊັບ ລວມທັງການຄິດໄລ່ຍອດເຫຼືອສຸດທິ ແລະ ການກໍານົດຈໍານວນເງິນສຸດທ້າຍ ເພື່ອການຫັກບັນຊີ.

ເມື່ອໄດ້ຮັບຄໍາສັ່ງຈ່າຍ ຫຼື ໂອນຫຼັກຊັບ ລະບົບໄລ່ລຽງຈະດໍາເນີນການ ດັ່ງນີ້:

1. ຖ້າຫາກເປັນທຸລະກໍາເຄືອຂ່າຍດຽວກັນ ຈະດໍາເນີນການໄລ່ລຽງຕາມແຕ່ລະທຸລະກໍາ;
2. ຖ້າຫາກເປັນທຸລະກໍາຂ້າມເຄືອຂ່າຍ ຈະຄິດໄລ່ຍອດເຫຼືອສຸດທິ ແລະ ກໍານົດຈໍານວນເງິນສຸດທ້າຍເພື່ອຫັກບັນຊີລວມທຸກທຸລະກໍາເປັນຄັ້ງດຽວ.

**ມາດຕາ 18 ລະບົບຫັກບັນຊີ**

ພາຍຫຼັງທີ່ໄດ້ຮັບຂໍ້ມູນຈາກການໄລ່ລຽງ ລະບົບຫັກບັນຊີຈະດໍາເນີນການຫັກບັນຊີຕາມທຸລະກໍາ ແລະ ຫັກບັນຊີສຸດທິ.

ການຫັກບັນຊີຕາມທຸລະກໍາ ແມ່ນການຫັກບັນຊີ ຕາມຄໍາສັ່ງຈ່າຍ ຫຼື ໂອນຫຼັກຊັບ ຊຶ່ງເກີດຂຶ້ນເປັນແຕ່ລະລາຍການ ຕາມການສັ່ງໂອນແຕ່ລະຄັ້ງ.

ການຫັກບັນຊີສຸດທິ ແມ່ນການຫັກບັນຊີຂັ້ນສຸດທ້າຍ ທີ່ເກີດຂຶ້ນເປັນແບບສຸດທິໃນໜຶ່ງຄັ້ງ ຫຼື ຫຼາຍຄັ້ງ ຕາມເວລາທີ່ກຳນົດໄວ້ລ່ວງໜ້າ.

ໃນກໍລະນີທີ່ຜູ້ເຂົ້າຮ່ວມ ໄດ້ມອບໝາຍ ຫຼື ຍົກເລີກ ການມອບໝາຍເປັນຕົວແທນຫັກບັນຊີ ຕ້ອງເຮັດເປັນລາຍລັກອັກສອນ ໂດຍກຳນົດສິດໃຫ້ແກ່ຜູ້ຮັບມອບໝາຍຢ່າງຈະແຈ້ງ ແລະ ຕ້ອງສົ່ງໜັງສືມອບໝາຍດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ ຊາບກ່ອນເຈັດວັນ.

**ມາດຕາ 19 ການໂອນເງິນທາງເອເລັກໂຕຣນິກ**

ການໂອນເງິນທາງເອເລັກໂຕຣນິກ ແມ່ນການໂອນເງິນຂອງບຸກຄົນໃດໜຶ່ງ ທີ່ໄດ້ອະນຸຍາດ ຫຼື ອອກຄຳສັ່ງໃຫ້ທະນາຄານທຸລະກິດ ຫຼື ຜູ້ໃຫ້ບໍລິການຊຳລະ ຫັກເອົາເງິນ ຫຼື ໂອນເງິນເຂົ້າໃນບັນຊີທີ່ເປີດໄວ້ນຳທະນາຄານດັ່ງກ່າວ ໂດຍຜ່ານເຄື່ອງມືຊຳລະ. ການໂອນເງິນທາງເອເລັກໂຕຣນິກ ປະກອບດ້ວຍ ການໂອນເງິນແບບມີ ແລະ ການໂອນເງິນແບບໜີ້.

ທະນາຄານທຸລະກິດ ຫຼື ຜູ້ໃຫ້ການບໍລິການຊຳລະ ຕ້ອງເປີດເຜີຍເງື່ອນໄຂ ແລະ ຄວາມຮັບຜິດຊອບຕ່າງໆ ໃນການໂອນເງິນທາງເອເລັກໂຕຣນິກ ໃຫ້ລູກຄ້າຂອງຕົນຢູ່ບ່ອນທີ່ເຫັນໄດ້ງ່າຍ ເຊັ່ນ: ຢູ່ສະຖານທີ່ໃຫ້ບໍລິການຂອງຕົນເອງ ຫຼື ຜ່ານສື່ມວນຊົນຕ່າງໆ.

ຂັ້ນຕອນ, ວິທີການ ແລະ ຮູບແບບການໂອນເງິນທາງເອເລັກໂຕຣນິກ ແມ່ນກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ການອອກເຄື່ອງມືຊຳລະ**

ທະນາຄານທຸລະກິດ ແລະ ຜູ້ໃຫ້ບໍລິການຊຳລະ ສາມາດອອກເຄື່ອງມືຊຳລະໃຫ້ແກ່ລູກຄ້າຂອງຕົນ ດັ່ງນີ້:

1. ບັດຊຳລະ ເຊັ່ນ: ບັດຖອນເງິນ, ບັດສິນເຊື່ອ, ບັດເງິນຝາກ;
2. ເງິນເອເລັກໂຕຣນິກ;
3. ອຸປະກອນຊຳລະ ເຊັ່ນ: ເຄື່ອງຮູດບັດ (EDC=Electronic Data Capture), ເຄື່ອງຝາກ-ຖອນເງິນ (ATM=Automated Teller Machine), Software ຫຼື application ສຳລັບການໂອນເງິນ;
4. ເຄື່ອງມືອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

ເງື່ອນໄຂ, ຮູບແບບ ແລະ ມາດຕະຖານ ໃນການອອກເຄື່ອງມືຊຳລະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊຳລະ, ຕົວແທນ ແລະ ຜູ້ຮັບຈ້າງງານພາຍນອກ ຕ້ອງປະຕິບັດລະບຽບການຕ່າງໆ ກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງເຂັ້ມງວດ.

**ມາດຕາ 22 ການເຂົ້າເຖິງຂໍ້ມູນ ແລະ ການເປີດເຜີຍຂໍ້ມູນ**

ຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊໍາລະ ແລະ ຜູ້ເຂົ້າຮ່ວມ ຕ້ອງສະໜອງທຸກຂໍ້ມູນທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດຂອງຕົນ ແລະ ຂໍ້ມູນທີ່ກ່ຽວຂ້ອງຂອງບໍລິສັດໃນກຸ່ມຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ.

**ມາດຕາ 23 ຄ່າທໍານຽມ ແລະ ຄ່າບໍລິການ**

ທະນາຄານແຫ່ງ ສປປ ລາວ ເກັບຄ່າທໍານຽມ ແລະ ຄ່າບໍລິການ ຈາກຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊໍາລະ ແລະ ຜູ້ເຂົ້າຮ່ວມ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກແຕ່ລະໄລຍະ.

## ພາກທີ III
## ການຄຸ້ມຄອງລະບົບຊໍາລະ

**ມາດຕາ 24 ສິດ ແລະ ໜ້າທີ່ຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ຕົ້ນຕໍ ໃນການຄຸ້ມຄອງລະບົບຊໍາລະ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ແຜນການ ເພື່ອພັດທະນາລະບົບຊໍາລະ ໃຫ້ມີຄວາມທັນສະໄໝ ແລະ ປອດໄພ;
2. ຄົ້ນຄວ້າສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກໍາກ່ຽວກັບວຽກງານຄຸ້ມຄອງລະບົບຊໍາລະ;
3. ອອກ ແລະ ຖອນ ໃບອະນຸຍາດການໃຫ້ບໍລິການຊໍາລະ ຫຼື ຄວບຄຸມລະບົບ;
4. ພິຈາລະນາກ່ຽວກັບການອອກເຄື່ອງມືຊໍາລະ;
5. ກໍານົດເງື່ອນໄຂ, ມາດຕະຖານການດໍາເນີນງານ ແລະ ດ້ານເຕັກນິກຕ່າງໆຂອງການບໍລິການຊໍາລະ, ການໄລ່ລຽງ ແລະ ການຫັກບັນຊີ;
6. ອໍານວຍຄວາມສະດວກ, ຄວບຄຸມ ຫຼື ເຂົ້າຮ່ວມໃນລະບົບຊໍາລະ;
7. ໃຫ້ບໍລິການຊໍາລະ ຫຼື ຄວບຄຸມລະບົບດ້ວຍຕົນເອງ;
8. ເປັນສູນຮັບຝາກຫຼັກຊັບ ແລະ ເປັນສື່ກາງໃນການຊື້ ຫຼື ຂາຍຫຼັກຊັບ ໃນລະບົບຫັກບັນຊີ;
9. ຖືບັນຊີເງິນຝາກໃຫ້ແກ່ ຜູ້ຄວບຄຸມລະບົບ ແລະ ຜູ້ເຂົ້າຮ່ວມ ເພື່ອນໍາໃຊ້ໃນການໄລ່ລຽງ ແລະ ຫັກບັນຊີ;
10. ໃຫ້ກູ້ຢືມລ່ວງໜ້າພາຍໃນວັນ ໃຫ້ແກ່ຜູ້ເຂົ້າຮ່ວມໃນກໍລະນີທີ່ເງິນໃນບັນຊີບໍ່ພຽງພໍ ແຕ່ຕ້ອງມີຫຼັກຊັບຄໍ້າປະກັນ;
11. ຊຸກຍູ້, ຕິດຕາມກວດກາການປະຕິບັດວຽກງານຂອງຜູ້ຄວບຄຸມລະບົບ, ຜູ້ເຂົ້າຮ່ວມ ແລະ ຜູ້ໃຫ້ບໍລິການຊໍາລະ;
12. ປະຕິບັດມາດຕະການ ຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້;
13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

## ມາດຕາ 25 ຮູບການ ແລະ ເນື້ອໃນການກວດກາ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຕິດຕາມ ແລະ ກວດກາລະບົບຊໍາລະ ຊຶ່ງປະກອບມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບສຸກເສີນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບສຸກເສີນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ເນື້ອໃນການກວດກາ ມີດັ່ງນີ້:

1. ກວດກາການປະຕິບັດເນື້ອໃນ ແລະ ເງື່ອນໄຂໃນໃບອະນຸຍາດຂອງຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການຊໍາລະ ລວມທັງການເຄື່ອນໄຫວຂອງຜູ້ເຂົ້າຮ່ວມ ທີ່ກ່ຽວຂ້ອງກັບລະບົບຊໍາລະ;
2. ກວດກາການຈັດຕັ້ງປະຕິບັດມາດຕະການ, ຄໍາສັ່ງ ແລະ ຄໍາແນະນໍາ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;
3. ກວດກາສະຖານທີ່, ອຸປະກອນ, ເຄື່ອງຈັກ, ລະບົບປຶ້ມບັນທຶກບັນຊີ ຫຼື ເອກະສານ ອື່ນໆທີ່ກ່ຽວຂ້ອງກັບບັນຊີ ຫຼື ທຸລະກໍາຂອງຜູ້ເຂົ້າຮ່ວມ, ຜູ້ຄວບຄຸມລະບົບ ຫຼື ຜູ້ໃຫ້ບໍລິການຊໍາລະ ແລະ ຫ້ອງການໃດໜຶ່ງຂອງພວກກ່ຽວ ທີ່ຕັ້ງຢູ່ພາຍໃນປະເທດ;
4. ກວດກາການປະຕິບັດໜ້າທີ່ອື່ນໆ ກ່ຽວກັບການຊໍາລະ, ການໄລ່ລຽງ, ການຫັກບັນຊີ ຫຼື ການອອກເຄື່ອງມືຊໍາລະ ເພື່ອໃຫ້ສາມາດປະຕິບັດໜ້າທີ່ຂອງຕົນທີ່ພົວພັນກັບການຊໍາລະ.

ທະນາຄານແຫ່ງ ສປປ ລາວ ສາມາດດໍາເນີນການດ້ວຍຕົນເອງ ຫຼື ມອບໝາຍໜ້າທີ່ ໃຫ້ນັກກວດສອບພາຍນອກ ໃນການກວດສອບບັນຊີ, ປຶ້ມບັນຊີ, ເອກະສານ ແລະ ບົດບັນທຶກຂອງຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊໍາລະ ແລະ ຜູ້ເຂົ້າຮ່ວມ.

## ມາດຕາ 26 ການກວດການອກດິນແດນ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ສາມາດດໍາເນີນການກວດກາບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າ ຂອງຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການຊໍາລະ ທີ່ຕັ້ງຢູ່ຕ່າງປະເທດ ໂດຍປະສານສົມທົບກັບອົງການທີ່ກ່ຽວຂ້ອງຂອງຕ່າງປະເທດ.

## ມາດຕາ 27 ການລາຍງານຂອງຜູ້ເຂົ້າຮ່ວມ

ຜູ້ເຂົ້າຮ່ວມ ຕ້ອງປະຕິບັດລະບົບລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບການເຄື່ອນໄຫວທີ່ກ່ຽວຂ້ອງກັບລະບົບຊໍາລະ ດັ່ງນີ້:

1. ລາຍງານປົກກະຕິ ແມ່ນການລາຍງານກ່ຽວກັບການບໍລິຫານ, ການດຳເນີນງານ ແລະ ສະພາບ ທາງດ້ານການເງິນຂອງຕົນ ແລະ ບໍລິສັດໃນກຸ່ມ ເປັນປະຈຳເດືອນ, ໄຕມາດ, ຫົກເດືອນ ແລະ ປີ;
2. ລາຍງານຕາມການທວງຖາມຂອງທະນາຄານແຫ່ງ ສປປ ລາວ ແມ່ນການລາຍງານກ່ຽວກັບເຄືອຂ່າຍຂອງຜູ້ເຂົ້າຮ່ວມ ແລະ ບຸກຄົນ ທີ່ດຳເນີນການໃນນາມຜູ້ເຂົ້າຮ່ວມ ຕາມການຈ້າງງານພາຍນອກ ຊຶ່ງຕ້ອງສະໜອງຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດວຽກງານ ແລະ ຂໍ້ມູນອື່ນໆ ທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າມີຄວາມຈຳເປັນ.

# ພາກທີ IV
# ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ມາດຕະການທາງບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການທາງບໍລິຫານ ດັ່ງນີ້:

1. ແຈ້ງເຕືອນເປັນລາຍລັກອັກສອນ;
2. ຖອນໃບອະນຸຍາດດຳເນີນທຸລະກິດໃຫ້ການບໍລິການຊຳລະ, ຄວບຄຸມລະບົບ ຫຼື ການອະນຸຍາດທີ່ໄດ້ໃຫ້ແກ່ຜູ້ເຂົ້າຮ່ວມລະບົບ.

**ມາດຕາ 29 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ລົງບັນຊີຜິດ ຫຼື ບໍ່ລົງລາຍການບັນຊີໃນບັນຊີຂອງລະບົບຊຳລະ ຈະຖືກປັບໃໝ 300.000 (ສາມແສນ) ກີບຕໍ່ຄັ້ງ;
2. ຂັດຂວາງການກວດກາຂອງທະນາຄານແຫ່ງ ສປປ ລາວ ຫຼື ການປະຕິບັດງານ ຂອງຜູ້ກວດສອບບັນຊີທີ່ທະນາຄານແຫ່ງ ສປປ ລາວ ມອບໝາຍໃຫ້ເຮັດໜ້າທີ່ກວດສອບ ຈະຖືກປັບໃໝ 500.000 (ຫ້າແສນ) ກີບຕໍ່ຄັ້ງ;
3. ສ້າງຄວາມເສຍຫາຍ, ທຳລາຍ, ປ່ຽນແປງ ຫຼື ປອມແປງບັນຊີ, ປຶ້ມບັນຊີ ຫຼື ບົດບັນທຶກຂອງຜູ້ຄວບຄຸມລະບົບ ຫຼື ຜູ້ເຂົ້າຮ່ວມ ຈະຖືກປັບໃໝ 1.000.000 (ໜຶ່ງລ້ານ) ກີບຕໍ່ຄັ້ງ.

# ພາກທີ V
# ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີຂໍ້ມູນຂ່າວສານ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການ ແລະ ຜູ້ເຂົ້າຮ່ວມ ຈົ່ງຮັບຮູ້ ແລະ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ຜູ້ຄວບຄຸມລະບົບ, ຜູ້ໃຫ້ບໍລິການຊໍາລະ ທີ່ດໍາເນີນທຸລະກິດກ່ອນວັນທີ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຕ້ອງສ້າງ ຫຼື ປັບປຸງໂຄງຮ່າງການຈັດຕັ້ງ, ການບໍລິຫານ ແລະ ການດໍາເນີນງານຂອງຕົນ ກ່ຽວກັບການໃຫ້ບໍລິການ ຊໍາລະ ແລະ/ຫຼື ການຄວບຄຸມລະບົບ ໃຫ້ສອດຄ່ອງຕາມຂໍ້ຕົກລົງສະບັບນີ້ ພາຍໃນກໍານົດເວລາ ເກົ້າສິບວັນ ນັບ ແຕ່ວັນທີ່ຂໍ້ຕົກລົງສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ